# ປະສົບກາ  ປູກພືດໝູນວຽນໃນພື້ນທີ່ເກົ່າ
# ເປັນການນຳໃຊ້ພື້ນທີ່ໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ

**ໂດຍ: ທ່ານ ພອນປະເສີດ ສີຫາ**

## 1. ສະພາບຄວາມເປັ  ມາ

ພະແ  ກກະສິກຳ ແລະ ປ່າໄມ້ປະຈຳແຂວງໄຊຍະບູລີ (ຂະແໜງປູກຝັງ)ຮ່ວມກັບ ບໍລິສັດ ອາກຼີເດັບ (ACRIDEP) ເຊິ່ງເຄີຍເປັ ວິຊາກາ  ແລະ ຊ່ຽວຊາ ໃ ໂຄງກາ ິເວດ ກະສິກຳ (SCV) ມາກ່ອ , ເຊິ່ງໄດ້ເບິ່ງເຫັນບັນຫາການຜະລິດຂອງຊາວກະສິກອນ  ບ້າ  ໆຕາກ  ເມືອງໄຊຍະບູລີ  ແຂວງໄຊຍະບູລີ ກ່ຽວກັບການນຳໃຊ້ພື້ນທີ່ໄຮ່ບໍ່ຄຸ້ມຄ່າກັບ  ຕົ້ນທຶນທີ່ໄດ້ທຸ້ມເທໄປ,  ປະໃຫ້ເນື້ອທີ່ເປົ່າຫວ່າງເປັນເວລາຫຼາຍເດືອ  ເຮັດໃຫ້ຜົ  ຜະລິດທີ່ໄດ້ມາບໍ່ຕໍ່ເນື່ອງ ແລະ ບໍ່ກຸ້ມກິນ ແລະ ປະຊາຊົ  ຍັງຖາກຖາງປ່າ, ຈູດປ່າໃ  ແຕ່ລະປີ ສະນັ້ນ, ພະແ  ກກະສິກຳ ແລະ ປ່າໄມ້ ຮ່ວມກັບບໍລິສັດອາກຼີເດັບໃນການສືບຕໍ່ຂະຫຍາຍບົດຮຽນທີ່ໄດ້ມາຈາກລະບົບ (SCV) ໃຫ້ຊາວກະສິກອ  ຢູ່ບ້າ   ໆຕາ.

## 2. ເປົ້າໝາຍ

- ປູກພືດຫຼາຍຊະນິດປະສົມປະສານໃນພື້ນທີ່ດຽວກັນໃຫ້ໄດ້ຜົນຜະລິດຫຼາຍໆຢ່າງ ທີ່ສາມາດກິນໄດ້ ແລະ ຂາຍໄດ້.
- ໃຫ້ມີການໝູນວຽນພືດໃນພື້ນທີ່ເກົ່າໃຫ້ເປັນລະບົບ.
- ເຮັດໃຫ້ການນຳໃຊ້ພື້ນທີ່ໃຫ້ເກີດປະໂຫຍດສູງສຸດ.
- ໃຫ້ຊາວກະສິກອນມີຜົນຜະລິດທີ່ກຸ້ມກິນ.
- ລຸດຜ່ອນການບຸກເບີກເນື້ອທີ່ໃໝ່ເພື່ອທຳການຜະລິດ.

## 3. ຜົ  ໄດ້ຮັບຈາກກິດຈະກຳ:

ຜ່ານການຈັດຕັ້ງປະຕິບັດກິດຈະກຳໃ  ໄລຍະ 2ປີ ເຮັດໃຫ້ຊາວກະສິກອ  ມີຜະລິດຕະພັ  ຫຼາຍຢ່າງເຊັ່ນ: ເຂົ້າ, ສາລີ, ໝາກຖົ່ວແດງ ເຊິ່ງສາມາດຂາຍເພື່ອເອົາເງິນມາໝູນໃຊ້ໃນຊີວິດປະຈຳວັນຂອງຄອບຄົວໄດ້, ນອກຈາກນີ້ພື້ນທີ່ດັ່ງກ່າວຍັງມີພືດຜັກຊະນິດຕ່າງໆ ໄວ້ປະກອບໃ  ຄາບເຂົ້າແຕ່ລະວັ  ເຮັດໃຫ້ລຸດຜ່ອ  ລາຍຈ່າຍໃ  ຄອບຄົວລົງຢ່າງຫຼວງຫຼາຍ ເງິນທີ່ເຄີຍຈົກອອກໄປຊື້ໝາກເຜັດ, ໝາກເຂືອ ແລະ ພືດຜັກສະ ິດຕ່າງໆຍັງເຫຼືອໄວ້ໃຊ້ ຈ່າຍອື່ນໆ.

ຈາກທີ່ເຄີຍປູກເຂົ້າເປັ  ຫຼັກເຂົ້າທີ່ໄດ້ມາໃ  ແຕ່ລະປີປະມາ   1-1.2 ໂຕນ ບໍ່ພຽງພໍກັບຄວາມຕ້ອງກາ  ຂອງຄອບຄົວໃ  ແຕ່ລະປີຕ້ອງໄດ້ຊື້ເຂົ້າກິນເພີ່ມປະມານ   200ກິໂລ   ເຂົ້າສາ ,   ມາເຖິງປະຈຸບັ  ເນື້ອທີ່ດິນດັ່ງກ່າວປູກເຂົ້າເຄິ່ງໜຶ່ງໄດ້ເຂົ້າປະມານ 800 - 900 ກິໂລ ນອກຈາກນີ້ໄດ້ຂາຍຜົນຜະລິດສາລີ ແລະ ຖົ່ວແດງມາຊື້ເຂົ້າສາ  ເພີ່ມ 400 ກິໂລແລ້ວຍັງ ເຫຼືອເກັບໄວ້ຈຳນວນໜຶ່ງ, ຜົນຜະລິດສາລີລະດູແລ້ງແມ່ນໄດ້ຂາຍມາຮັບໃຊ້ຄອບຄົວເຮັດ ໃຫ້ຊີວິດການເປັນຢູ່ຂອງຄອບຄົວຄ່ອຍໆດີຂຶ້ນເທື່ອລະກ້າວ.

4. **ຂັ້ນຕອນໃນການຈັດຕັ້ງປະຕິບັດ:**

ເອົາຊາວກະສິກອ ໄປທັດສະ ະສຶກສາຢູ່ບໍລິສັດອາກູີເດັບພ້ອມທັງໄດ້ເບິ່ງຂັ້ນຕອນການຈັດຕັ້ງປະຕິບັດເຕັກ ິກແລະຜົ ໄດ້ຮັບຈາກກິດຈະກຳພ້ອມທັງລະບົບກາ ຕະຫຼາດຂອງຜະລິດຕະພັ ພືດແຕ່ລະຊະ ິດ

5. **ເຕັກ ິກກາ ປະຕິບັດ**

1. ຈັດແບ່ງເນື້ອທີ່ດິນອອກເປັນ 3 ຕອນຕາມພືດທີ່ຈະປູກ (ເຂົ້າ, ສາລີ, ຖົ່ວແດງ)
   - ແບ່ງປະມານ 20% ດ້ານເທິງພູ ປູກຖົ່ວແດງ.
   - ແບ່ງປະມາ 30% ຕໍ່ລົງມາ ປູກສາລີ.
   - ສ່ວນທີ່ເຫຼືອປະມານ 50% ຢູ່ຕີນພູ ສຳລັບປູກເຂົ້າ.
2. ອາ າໄມພື້ນທີ່ໃຫ້ກ້ຽງດີ.
3. ປູກລາສີໃ ລະຫວ່າງທ້າຍເດືອ 4 ຫາ ຕົ້ ເດືອ 5 ສາກົ ໄລຍະຫ່າງລະຫວ່າງແຖວ 75 ຊ.ມ, ລະຫວ່າງຕົ້ 30 ຊ.ມ.
4. ຫຼັງຈາກນັ້ນກໍປູກເຂົ້າແຕ່ຕົ້ນ - ກາງເດືອນ 5 ສາກົນ.
5. ຕົ້ນ - ກາງເດືອ 6 ສາກົນເສຍຫຍ້າຄັ້ງທີ່1ໃຫ້ແກ່ສາລີ ແລະ ເຂົ້າພ້ອມທັງເສຍຫຍ້າເນື້ອທີ່10%ຂ້າງເທິງເພື່ອປູກຖົ່ວແດງ.
6. ກາງ - ທ້າຍເດືອນ 6 ສາກົນກໍລົງມືປູກຖົ່ວແດງ.
7. ກາງ - ທ້າຍເດືອນ 7 ສາກົນເສຍຫຍ້າຄັ້ງທີ 2.
8. ກາງ - ທ້າຍເດືອນ 8 ເມື່ອສາລີເລີ່ມແກ່ໃບ ແລະ ຝັກປ່ຽນເປັນສີເຫຼືອງ ແລະ ສີນ້ຳຕານ 50% ຂຶ້ນໄປກໍລົງມືປູກຖົ່ວແດງສະລັບຫວ່າງສາລີ.
9. ກາງເດືອ 9 ເລີ່ມເກັບກ່ຽວສາລີ.
10. ພາຍຫຼັງເກັບກ່ຽວສາລີແລ້ວໃຫ້ລົ້ມຕົ້ນສາລີລົງເພື່ອໃຫ້ຖົ່ວແດງຂຶ້ນໄດ້ດີ.
11. ກາງເດືອນ 10 ເລີ່ມເກັບກ່ຽວເຂົ້າໄຮ່.
12. ພາຍຫຼັງເກັບກ່ຽວເຂົ້າໄຮ່ສຳເລັດແລ້ວກະກຽມດິ ປູກສາລີລະດູແລ້ງ.
13. ທ້າຍເດືອ 10 ຫາ ຕົ້ ເດືອ 11 ລົງມືປູກສາລີລະດູແລ້ງ.
14. ທ້າຍເດືອ 11 ຫາຕົ້ນເດືອນ 12 ກໍໄດ້ເກັບກ່ຽວຖົ່ວແດງ, ພາຍຫຼັງເກັບກ່ຽວແລ້ວໃຫ້ເອົາເຄືອຖົ່ວແດງຄຸມໄວ້ດິນຄືເກົ່າ (ບໍ່ໃຫ້ຈູດ).




**ແຜ ຜັງກາ ປູກໃ ປີທໍາອິດ**

15. ຜົນຜະລິດເຂົ້າ ແລະ ຖົ່ວແດງສາມາດຄັດເລືອກໄວ້ປູກປີຕໍ່ໄປໄດ້.
16. ເມື່ອສັງເກດເຫັນສາລີລະດູແລ້ງເລີ່ມແກ່ໃບ ແລະ ຝັກປຸ່ງນເປັນສີເຫຼືອງ ແລະ ສີນ້ຳຕານ 50% ຂຶ້ນໄປກໍລົງມືປູກຖົ່ວແດງສະລັບຫວ່າງສາລີຕົ່ມ.
17. ຖົ່ວແດງທີ່ປູກໃນຄັ້ງນີ້ແມ່ນບໍ່ສາມາດເກັບກ່ຽວຜົນຜະລິດໄດ້ສະນັ້ນເມື່ອເຖິງ ຊ່ວງເວລາການຜະລິດລະດູຕໍ່ໄປເຮົາກໍເສຍອອກເພື່ອເປັນຝຸ່ນໃຫ້ພືດອື່ນໆ.




**ຜັງກາ ປູກຖົ່ວແດງສະລັບກັບສາລີ**

18. ປີທີ 2 ແມ່ນແບ່ງເນື້ອທີ່ເປັນພຽງ 2ຕອນ

- ຕອນທີ1: ແມ່ນເນື້ອທີ່ປູກຖົ່ວແດງ ແລະ ສາລີໃນປີທຳອິດໃຫ້ປູກເຂົ້າໄຮ່.
- ຕອນທີ2: ປູກເຂົ້າ, ສາລີລະດູແລ້ງ ແລະ ຖົ່ວແດງໃຫ້ປູກສາລີປະສົມຖົ່ວແດງ.

19. ປີຕໍ່ໆໄປກໍໃຫ້ໝູນວຽນພືດ ແລະ ໝູນວຽນພື້ນທີ່ໄປເລື້ອຍໆ.




**ແຜ ຜັງກາ ປູກໃ ປີທີ 2**

## 6. ບົດຮຽນທີ່ໄດ້ຈາກການຈັດຕັ້ງປະຕິບັດຮູບແບບນີ້:

### 6.1 ທາງດ້າ ດີ:

- ວິທີການປູກແມ່ນເຮັດແບບງ່າຍດາຍພຽງແຕ່ຄຸ້ນເຄີຍກັບເຄື່ອງສັກພຽງ 1ວັ ກໍສາມາດ ຈໍໃຊ້ໄດ້.
- ໄດ້ຜົນຜະລິດຫຼາກຫຼາຍ ແລະ ຕໍ່ເນື່ອງ.
- ເປັນການປັບປຸງດິນໃນແຕ່ລະປີ.
- ມີພືດປູກ ແລະ ເສດພືດຄຸມດິນຕະຫຼອດປີ.
- ວັດສະພືດມີໜ້ອຍລົງ.
- ຜົນຜະລິດພືດຫຼັກມີກາ ຄົງໂຕ ແລະ ມີທ່າອ່ຽງເພີ່ມຂຶ້ນ.
- ສາມາດໄດ້ລາຍຮັບເພີ່ມຈາກການຂາຍຖົ່ວແດງ.

### 6.2 ຂໍ້ຈຳກັດ:

- ເຄື່ອງສັກທີ່ໃຊ້ໃນການປູກບໍ່ມີຂາຍຢູ່ທ້ອງຕະຫຼາດທ້ອງຖິ່ນ.
- ຖ້າພື້ນທີ່ໆບໍ່ສາມາດປູກໄດ້ 2 ລະດູຈໍາບໍສາມາດເຮັດໄດ້ຢ່າງຕໍ່ເນື່ອງ.

- ຕະຫຼາດຖົ່ວແດງໃນຂົງເຂດຊົນນະບົດຂ້ອນຂ້າງຊອກຍາກ.

- ບໍ່ຄວນໃຊ້ຮູບແບບນີ້ໃນເງື່ອນໄຂຂາດຕະຫຼາດຮອງຮັບພືດເສດຖະກິດ ເພາະວ່າຜົ ຜະລິດເຂົ້າຈະໄດ້ໜ້ອຍກວ່າປູກເຂົ້າຢ່າງດຽວໃນພື້ນທີ່ທັງໝົດຈະເຮັດໃຫ້ຂາດເຂົ້າກິ .

**6.3 ປັດໃຈທີ່ສຳຄັນ:**

- ປັດໃຈທີ່ສຳຄັນທີ່ສຸດໃນການຜະລິດແບບນີ້ແມ່ນການຕະຮອງຮັບຜົນຜະລິດພືດ ເຊັ່ນ: ສາລີ, ຖົ່ວແດງ.....ເພາະວ່າຜົນຜະລິດເຫຼົ່ານັ້ນຈະສາມາດຂາຍເປັນເງິນ ແລ້ວໄປໝູນໃຊ້ໃນດ້ານອື່ນໆໄດ້ເຊັ່ນ: ຊື້ເຂົ້າເພີ່ມເປັນຕົ້ນ.. ..

- ອີກປັດໃຈໜຶ່ງແມ່ນເຄື່ອງສັກ, ຖ້າບໍ່ມີເຄື່ອງສັກກໍສາມາດເຮັດໄດ້ແຕ່ວ່າການ ກຽມດິ ຕ້ອງລະອຽດ ແລະ ການທີ່ຈະປູກຖົ່ວແດງປະສົມໃນທ້າຍລະດູຂອງສາລີນັ້ນແມ່ນສາມາດເຮັດໄດ້ຍາກຫຼາຍ.

**6.4 ສະພາບເງື່ອນໄຂທີ່ເໝາະສົມ:**

- ຕ້ອງເປັນສະພາບທີ່ສາມາດປູກພືດໄດ້ທັງ 2 ລະດູ.

- ເໝາະສົມກັບຜູ້ທີ່ມີເ ືອທີ່ການຜະລິດໜ້ອຍ ແລະ ມີແຮງງານໜ້ອຍ.

## 7 ຂໍ້ແ ະ ໍາ

1. ຕາມ ະໂຍບາຍຂອງລັດຖະບາ ໄດ້ມອບດິ ມອບປ່າໃຫ້ຊາວກະສິກອ ໄດ້ຊົມໃຊ້ ນີ້ແມ່ ຕົ້ທຶ ອັ ມະຫາສາ ທີ່ເຮົາໄດ້ມາພຽງແຕ່ເຮົາຕັດສິ ໃຈໃ ການຈັດຕັ້ງປະຕິບັດເຮົາຈະປະສົບຜົສໍາເລັດ.
2. ສາມາດເລືອກປູກພືດສະ ິດອື່ນໆເພີ່ມໃ ພື້ນທີ່ໄດ້ອີງຕາມຄວາມຕ້ອງກາ ໃ ກາ ບໍລິໂພກ ແລະ ຄວາມຕ້ອງກາ ຂອງທ້ອງຕະຫຼາດ.
3. ຖ້າຢາກເຮັດໃຫ້ຊີວິດກາ ເປັ ຢູ່ດີຂຶ້ນເຮົາຕ້ອງລຸດຜ່ອ ລາຍຈ່າຍດ້ວຍກາ ປູກພືດຜັກຊະ ິດຕ່າງໆທີ່ເຮົາຍັງໄດ້ຊື້ກິນ.
4. ສະພາບກາ ມີກາ ປ່ຽ ແປງໄປໃ ແຕ່ລະປີ, ແ ່ ອ ດິ ຕ້ອງມີກາ ເຊື່ອມຄຸ ະພາບສະນັ້ນ, ຍັງມີຫຼາຍໆບົດຮຽ ທີ່ຕ້ອງໄດ້ຮຽ ຮູ້ອີກຕື່ມເຊັ່ນ:

   - ການຄັດເລືອກແ ວພັ ເພື່ອໄວ້ປູກເອງ.
   - ຊະນິດພືດອື່ນໆທີ່ສາມາດປູກຮ່ວມກັ ໄດ້ດີ.
   - ເຕັກນິກກາ ປັບປຸງດິ .